**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຍທຂ PWT

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ຫ້ອງການ

ເລກທີ 26692 /ຍທຂ.ຫກ
ນະຄອນຫລວງວຽງຈັນ, ວັນທີ 23 DEC 2021

# ແຈ້ງການ

**ຮຽນ:** - **ທ່ານຫົວໜ້າ ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ທີ່ນັບຖື;**
- **ທ່ານ ຫົວໜ້າ ດ່ານສິນຄ້າສາກົນ ທ່າບົກທ່ານາແລ້ງ;**
- **ທ່ານ ຫົວໜ້າ ດ່ານສາກົນ ຂົວມິດຕະພາບ I;**
- **ບັນດາຜູ້ປະກອບການຂົນສົ່ງ, ຈັດສົ່ງສິນຄ້າ ແລະ ໂລຊິດສະຕິກ ທັງພາຍໃນ ແລະ ຕ່າງປະເທດ.**

**ເລື່ອງ: ການເປີດບໍລິການທ່າບົກທ່ານາແລ້ງ, ນະຄອນຫຼວງວຽງຈັນ**

- ອີງຕາມ ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 24/ສພຊ, ລົງວັນທີ 12/12/2012;
- ອີງຕາມ ດຳລັດ ວ່າດ້ວຍທ່າບົກ ສະບັບເລກທີ 513/ລບ, ລົງວັນທີ 04/08/2021;
- ອີງຕາມ ບົດລາຍງານ ຂອງກົມຂົນສົ່ງ ສະບັບເລກທີ 26351/ຍທຂ.ກຂສ, ລົງວັນທີ 20/12/2021;
- ອີງຕາມ ຄຳເຫັນຂອງທ່ານ ລັດຖະມົນຕີ ຄັ້ງວັນທີ 23/12/2021.

ຫ້ອງການກະຊວງ ໂຍທາທິການ ແລະ ຂົນສົ່ງ ຂໍຖືເປັນກຽດ ແຈ້ງມາຍັງພາກສ່ວນກ່ຽວຂ້ອງ ຊາບວ່າ: ພາຍຫຼັງທີ່ໄດ້ເປີດບໍລິການ ທ່າບົກທ່ານາແລ້ງ ໃນວັນທີ 04 ທັນວາ 2021 ແລະ ເພື່ອປະຕິບັດຕາມ ດຳລັດ ວ່າດ້ວຍທ່າບົກ ສະບັບເລກທີ 513/ລບ, ລົງວັນທີ 04/08/2021 ໂດຍສະເພາະແມ່ນການຈັດຕັ້ງປະຕິບັດ ຕາມມາດຕາ 18 ຂອບເຂດການໃຫ້ບໍລິການທ່າບົກ ທີ່ໄດ້ລະບຸໄວ້ຢູ່ວັກສຸດທ້າຍວ່າ: ພາຫະນະຂົນສົ່ງສິນຄ້າ ແລະ ຕູ້ສິນຄ້າ ທີ່ນຳເຂົ້າ-ສົ່ງອອກ ແລະ ຜ່ານແດນ ສປປ ລາວ ບ່ອນທີ່ມີທ່າບົກຕັ້ງຢູ່ ຕ້ອງຜ່ານທ່າບົກນັ້ນ. ສະນັ້ນ, ຈຶ່ງແຈ້ງມາບັນດາພາກສ່ວນທີ່ກ່ຽວຂ້ອງພາກລັດ ເພື່ອຄວາມກະຈ່າງແຈ້ງ ໃນພາລະບົດບາດຂອງທ່າບົກທ່ານາແລ້ງ ແລະ ໃຫ້ຜູ້ປະກອບການທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ເຂົ້າໄປນຳໃຊ້ທ່າບົກທ່ານາແລ້ງ ຕາມກົດໝາຍ ແລະ ລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມນີ້ດ້ວຍ.

**ຫົວໜ້າຫ້ອງການ**

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ຫ້ອງການ

ເກສອນ ວົງສາ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຍທຂ PWT

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ກົມຂົນສົ່ງ

ເລກທີ 26658 /ຍທຂ.ກຂສ

ນະຄອນຫລວງວຽງຈັນ, ວັນທີ 23-12-2021

ຮຽນ: ທ່ານ ຫົວໜ້າກົມ ການຂົນສົ່ງທາງບົກ, ກະຊວງ ຄົມມະນາຄົມ ແຫ່ງ ຣາຊະອານາຈັກໄທ ທີ່ນັບຖື.

ເລື່ອງ: ການເປີດບໍລິການທ່າບົກທ່ານາແລ້ງ, ນະຄອນຫຼວງວຽງຈັນ

- ອີງຕາມ ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 24/ສພຊ, ລົງວັນທີ 12/12/2012;
- ອີງຕາມ ດຳລັດ ວ່າດ້ວຍທ່າບົກ ສະບັບເລກທີ 513/ລບ, ລົງວັນທີ 04/08/2021;

ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະ ຂົນສົ່ງ ແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ໂດຍປະຕິບັດຕາມ ສົນທິສັນຍາ ວ່າດ້ວຍທ່າບົກ (Intergovernmental Agreement on Dry port) ໄດ້ຖືກຮັບຮອງໃນກອງປະຊຸມຄັ້ງທີ 69 ຂອງຄະນະກຳມະການເສດຖະກິດ ແລະ ສັງຄົມ ສຳລັບອາຊີ ແລະ ປາຊີຟິກ ຂອງອົງການສະຫະປະຊາຊາດ ຕາມຍັດຕິ ສະບັບເລກທີ 69/7, ລົງວັນທີ 01 ພຶດສະພາ 2013 ແລະ ສົນທິສັນຍາດັ່ງກ່າວ ໄດ້ເປີດໃຫ້ບັນດາລັດພາຄີລົງນາມໃນວັນທີ 7-8 ພະຈິກ 2013 ທີ່ ບາງກອກ, ຣາຊະອານາຈັກໄທ. ສ່ວນ ສປປ ລາວ ແມ່ນໄດ້ລົງນາມໃນວັນທີ 07ພະຈິກ 2013 ແລະ ໄດ້ສຳເລັດການໃຫ້ສັດຕະບັນ ໃນວັນທີ 05 ພະຈິກ 2019.

ປັດຈຸບັນ ລັດຖະບານ ແຫ່ງ ສປປ ລາວ ໄດ້ເປີດບໍລິການ ທ່າບົກທ່ານາແລ້ງ (Thanaleng Dry Port) ເພື່ອບໍລິການສິນຄ້າ ຂາເຂົ້າ-ຂາອອກ ລະຫວ່າງປະເທດ ແລະ ຜ່ານແດນສາກົນ. ສະນັ້ນ, ຈຶ່ງຂໍຄວາມຮ່ວມມືມາຍັງທ່ານ ຊ່ວຍແຈ້ງໄປຍັງພາກສ່ວນລັດທີ່ກ່ຽວຂ້ອງ ແລະ ພາກທຸລະກິດ ຂົນສົ່ງ, ຈັດສົ່ງສິນຄ້າ ໃຫ້ເຂົ້າມານຳໃຊ້ ທ່າບົກທ່ານາແລ້ງ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ດ້ວຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ໃຫ້ຄວາມຮ່ວມມື ຕາມນີ້ດ້ວຍ.

**ຫົວໜ້າກົມ**

ກະຊວງໂຍທາທິການ ແລະ ຂົນສົ່ງ / ກົມຂົນສົ່ງ

**ດຣ. ບຸນຕາ ອ່ອນນາວົງ**